# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 25 ກັນຍາ 2022 (09-25-2022)

---

## ຄວາມເຊື່ອສະແດງອອກໃນການສົນທະນາຂອງທ່ານ

*ມີໃຜແດ່ທີ່ເວລາທ່ານລົມກັບພວກເຂົາແລ້ວໄດ້ຮັບກຳລັງໃຈສເມີ?*

**ຈຸດສຳຄັນໃນບົດຮຽນ:** ເວລາທ່ານອີງໃສ່ພຣະເຈົ້າ, ຄຳເວົ້າຂອງທ່ານສະທ້ອນພຣະລັກສນະຂອງພຣະອົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ໂດຍສະເລັ່ຽແລ້ວຄົນໃຊ້ເວລາຫ້າສິບສອງນາທີຕໍ່ວັນເວົ້າເຖິງບາງຄົນທີ່ບໍ່ຢູ່ນຳ. ເວົ້າອີກແບບນຶ່ງ, ຄົນໃຊ້ເວລານຶ່ງຊົ່ວໂມງຕໍ່ວັນໃນການເວົ້າຂັວນ. ໃນຄຳສົນທະນາເຫຼົ່ານັ້ນ: 10 ເປີເຊັນແມ່ນການປະຈົບປະແຈງ, 75 ເປີເຊັນແມ່ນເປັນກາງ, ແລະ15 ເປີເຊັນໃນທາງລົບ.

ສ່ວນຫຼາຍຄົນບໍ່ຄ່ອຍໄດ້ຍິນສິ່ງທີ່ເວົ້າກ່ຽວກັບພວກເຂົາ. ແຕ່ວ່າແມ່ນຫຽັງເກີດຂຶ້ນຖ້າເຂົາຫາກໄດ້ຍິນ?

ຣາໂມນາເລົ່າເຣື່ອງເຫດການເພື່ອນຂອງນາງ ມີແຊວ ໄດ້ບັລຍາຍໃຫ້ນາງຟັງ. ຫຼັງຈາກອາຫານທ່ຽງທຸຣກິດ, ມີແຊວ ແລະຍິງອີກຄົນນຶ່ງເຂົ້າໄປຫ້ອງນ້ຳເພື່ອເສີມແຕ່ງໜ້າ. ຂນະທີ່ພວກເຂົາໄດ້ລົມກັນນັ້ນ, ການລົມເລັກນ້ອຍໄດ້ກາຍເປັນການເວົ້າຂວັນເພື່ອນຮ່ວມງານ, ເບັທ. ການສົນທະນາຂອງເຂົາບໍ່ໄດ້ຢູ່ໃນຂອບເຂດ 10 ເປີເຊັນຂອງການປະຈົບປະແຈງເວົ້າຂວັນ; ມັນມີແຕ່ທາງລົບເຕັມໆ. ນານເຖິງສອງນາທີເຕັມ, ມີແຊວ ໄດ້ດ່າຄຳຮຸນແຮງຕໍ່ເພື່ອນຮ່ວມງານຂອງນາງໃນເຣື່ອງທີ່ລາວເຮັດໃຫ້ທີມເສັຽຫາຍ. ຈາກນັ້ນໃນເວລາມິດງຽບຢູ່ນັ້ນ, ຍິງທັງສອງໄດ້ຍິນສຽງທີ່ຄຸ້ນເຄີຍສຽງປະຕູທີ່ຕິດຝືດຖືກໄຂອອກ. ວາດສາຍຕາໄປເບິ່ງທີ່ແວ່ນ, ເຂົາສະດຸ້ງເມື່ອແນມເຫັນ ເບັທ ຍ່າງອອກໄປ, ອັບອາຍ, ແລະໜ້າແດງ. ມີແຊວ ແນ່ໃຈວ່າໄດ້ເຫັນນ້ຳຕາ. ເບັທບໍ່ກັບມາເຮັດການອີກເລີຍ. ນາງໄດ້ລາອອກຈາກງານ, ແລະ ມີແຊວ ກໍບໍ່ໄດ້ເຫັນ ເບັທ ອີກເລີຍ.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງ ຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ຢາໂກໂບ 3:1-5ກ.</u>

*1 ພີ່ນ້ອງທັງຫລາຍຂອງເຮົາເອີຍ, ຢ່າໄດ້ພາກັນເປັນອາຈານຈຳນວນຫລວງຫລາຍ ເພາະພວກເຈົ້າກໍຮູ້ແລ້ວວ່າເຮົາທັງຫລາຍທີ່ເປັນຜູ້*
*ສອນນັ້ນ ຈະໄດ້ຮັບການຊົງພິພາກສາໜັກໜ່ວງກວ່າຜູ້ອື່ນ. 2 ເພາະວ່າພວກເຮົາທຸກຄົນເຮັດຜິດພາດຢູ່ເລື້ອຍຖ້າຜູ້ໃດບໍ່ໄດ້ເຮັດຜິດທາງ*
*ວາຈາ ຜູ້ນັ້ນແຫລະ, ເປັນຄົນສຳເລັດແລ້ວ ແລະສາມາດບັງຄັບທັງຕົວໄວ້ໄດ້ເໝືອນກັນ. 3 ຖ້າພວກເຮົາເອົາບັງຫຽນໃສ່ປາກມ້າເພື່ອໃຫ້*
*ມັນຟັງຄວາມ ພວກເຮົາກໍສາມາດບັງຄັບທັງຕົວມັນໃຫ້ຫັນໄປມາ. 4 ເບິ່ງແມ, ເຮືອກໍເໝືອນກັນ ເຖິງແມ່ນວ່າເປັນເຮືອໃຫຍ່ແລະຖືກ*
*ລົມພັດແລ່ນໄປ ເຮືອນັ້ນກໍຍັງຫັນໄປມາດ້ວຍໄມ້ໂທນທ້າຍອັນນ້ອຍໆ ຕາມໃຈປະສົງຂອງນາຍທ້າຍ. 5 ລີ້ນກໍເໝືອນກັນນັ້ນແຫລະ*
*ເປັນອະວັຍວະນ້ອຍໆ ແລະເວົ້າອວດອ້າງເຣື່ອງໃຫຍ່ ໆ,*

ໃນບົດຮຽນກ່ອນ, ພວກເຮົາພົບວ່າການກະທຳຂອງເຮົາຢືນຢັນຄວາມເຊື່ອຂອງເຮົາ ຍິ່ງສຳຄັນກວ່າຄຳເວົ້າລ້າໆ. ພວກເຮົາບໍ່ໄດ້ເວົ້າພຽງແຕ່ພວກເຮົາເຊື່ອ; ພວກເຮົາສະແດງອອກມາດ້ວຍການກະທຳ. ທ່ານຢາໂກໂບບໍ່ໄດ້ນຳໃຊ້ເພື່ອບອກວ່າຄວາມເວົ້າຂອງເຮົາບໍ່ສຳຄັນ. ໃນທາງກັບກັນ, ຄວາມເວົ້າກໍສຳຄັນ-ສຳຄັນຫຼາຍ. ເມື່ອເຮົາຍ້າຍເຂົ້າສູ່ຢາໂກໂບບົດ 3, ພວກເຮົາຊາບວ່າມັນສຳຄັນ

ແລະມີຣິດອຳນາດພຽງໃດ.

ຄຳເວົ້າມັນກໍທັມມະດາແລະກໍງ່າຍໃນການເວົ້າທີ່ພວກເຮົາສາມາດສູນເສັຽສິ່ງສຳຄັນຍ້ອນຄຳເວົ້າຄຳດຽວໄດ້ໂດຍງ່າຍໃນຈຳນວນເຕັມຂອງຄຳທີ່ໄດ້ເວົ້າແລະໄດ້ຍິນໃນແຕ່ລະວັນ. ນັກຄົ້ນຄວ້າໄດ້ພົບວ່າໂດຍສະເລັ່ຽ-ບໍ່ວ່າຍິງຫຼືຊາຍ-ເວົ້າ 16,000 ຄຳຕໍ່ວັນ. ຄົນທີ່ເວົ້າໜ້ອຍກວ່າ, ຄືຜູ້ຊາຍ, ເວົ້າພຽງ 700 ຄຳຕໍ່ວັນ, ແຕ່ວ່າຄົນທີ່ຊ່າງເວົ້າທີ່ສຸດ-ກໍແມ່ນຜູ້ຊາຍທີ່ສາມາດເວົ້າອອກ 47,000 ຄຳຕໍ່ວັນ! ຄຳເວົ້າພຽງຄຳດຽວມີຄວາມສຳຄັນໄດ້ແນວໃດ?

- ຖາມພໍ່ຜູ້ທີ່ຫາກໍ່ໄດ້ຍິນລູກສາວເວົ້າຄຳວ່າ "ຂໍຮັບ" ໃນວັນດອງຂອງນາງເບິ່ງ. (ມີຄວາມສຳຄັນຕໍ່ລາວສໍ່າໃດ?)
- ຖາມແມ່ຜູ້ທີ່ຄອງຄອຍຄຳເວົ້າຄຳແລກຂອງລູກໄບ້ຂອງນາງເບິ່ງ. (ມີຄວາມສຳຄັນຕໍ່ນາງຫຼາຍສໍ່າໃດ?)

ຄຳເວົ້າສຳຄັນ. ພວກມັນສາມາດທຳລາຍຫຼືໃຫ້ຄວາມຫວັງ. ຄຳເວົ້າຂອງພວກເຮົາມີອຳນາດໃນການແນະນຳ, ດົນໃຈ, ຊູໃຈ, ແລະຊຸກຍູ້. ຄຳເວົ້າຂອງຄຣູສ້າງຄວາມແຕກຕ່າງໃນຊີວິດນັກຮຽນຂອງນາງ. ຄຳເວົ້າທີ່ນາງເວົ້າມັນສຳຄັນທີ່ຫຼັກຕົ້ນຕໍຂອງການສິດສອນຄືນຳເອົາການຕັດສິນໃຫ້ເຄັ່ງຄັດຂຶ້ນ.

*ເມື່ອໃດທີ່ທ່ານໄດ້ເຫັນຄຳເວົ້າມີອິດທິພົນຕໍ່ບາງຄົນໃນທາງທີ່ດີ?*

ທ່ານຢາໂກໂບໄດ້ໃຊ້ຕົວຢ່າງເຣື່ອງມ້າແລະເຮືອເພື່ອໃຫ້ເຫັນພາບວ່າພວກເຮົາສາມາດບັງຂັບສິ່ງເຫຼົ່ານັ້ນໂດຍການໃຊ້ເຄື່ອງອຸປກອນທີ່ນ້ອຍກວ່າຫຼາຍເທົ່າ. ໂດຍສະເພາະ ລີ້ນຂອງຄົນເຮົາຍາວສາມນີ້ວກວ່າ, ໜັກສອງອາວສ໌ກວ່າ, ແລະເປັນກ້າມເນື້ອທັງນັ້ນ; ເຖິງຢ່າງໃດກໍຕາມ, ຣິດຂອງມັນ-ສິ່ງຜົນດີຫຼືຊົ່ວ-ບໍ່ສົມສ່ວນກັບຂນາດນ້ອຍຂອງມັນ. ກ້າມເນື້ອນ້ອຍໆມີຣິດຍິ່ງໃຫຍ່-"ມັນອວດອ້າງສິ່ງໃຫຍ່ ໆ."

ຂນາດນ້ອຍຂອງລີ້ນບໍ່ສາມາດຄວບຄຸມການທຳລາຍອັນໃຫຍ່ຫຼວງຂອງມັນໄດ້. ຄຳເວົ້າສາມາດທຳລາຍຜູ້ອື່ນດັ່ງດຽວກັບສະເກັດໄຟນ້ອຍໆສາມາດກະຈາຍເຊື້ອໄຟໄໝ້ລຸກລາມເຜົາຜານປ່າກ້ວາງໄດ້. ທ່ານຢາໂກໂບກໍໄດ້ຊີ້ແຈງວ່າ "ລີ້ນກໍເປັນໄຟ" ທີ່ເຜົາໄໝ້ວົງກະແສແຫ່ງຊີວິດ, ແລະ "ມັນເອງກໍຕິດໄຟມາຈາກນາຣົກ"(ຂໍ້ 6). ຄຳເວົ້າເຫຼົ່ານັ້ນເປັນຄຳເວົ້າທີ່ແຂງແຮງແທ້! ຜູ້ຂຽນພຣະຄັມພີອີກຜູ້ນຶ່ງໄດ້ໃຊ້ຄຳເວົ້າອື່ນທີ່ມີຣິດອຳນາດເພື່ອອະທິບາຍເຖິງລີ້ນວ່າ: "ຄົມເໝືອນດັ່ງລີ້ນງູ" (ພສສ 140:3).*"ຫຼຸມຝັງສົບທີ່ໄຂຢູ່,"*ແລະ *"ລີ້ນທີ່ມີພິດຮ້າຍ."* ພວກເຮົາຕ່າງກໍລ້ວນແຕ່ໄດ້ປະສົບກັບຜົນຮ້າຍຂອງລີ້ນ ແລະໄດ້ຮັບບາດແຜຈາກການເວົ້າຂ້ວນ, ການນິນທາທີ່ທຳລາຍ, ຫຼືການດູຖູກທີ່ເສັຽຫາຍ. ພວກເຮົາຍັງໄດ້ຮັບຜົນກະທົບຈາກການຕົວະຍົວະ, ການໃສ່ຮ້າຍປ້າຍສີ, ແລະຄຳເວົ້າໝິ່ນປມາດຕ່າງໆນາໆ. ປາກົດແຈ້ງແລ້ວວ່າ ຄຳເວົ້າມີຣິດອຳນາດ ແລະສາມາດທຳລາຍຄວາມສັມພັນ ແລະຊື່ສຽງຂອງຄົນເຮົາຢ່າງຮ້າຍແຮງ.

## 2. ຢາໂກໂບ 3:9-10.

*9 ພວກເຮົາໃຊ້ລີ້ນນັ້ນສັຣເສີນອົງພຣະຜູ້ເປັນເຈົ້າ ຄືພຣະບິດາຂອງເຮົາທັງຫລາຍ ດ້ວຍລີ້ນນັ້ນແຫລະ, ພວກເຮົາຍັງປ້ອຍດ່າມະນຸດທີ່*
*ພຣະເຈົ້າຊົງສ້າງໄວ້ຕາມຮູບເງົາຂອງພຣະອົງ. 10 ຄຳສັຣເສີນແລະຄຳປ້ອຍດ່າກໍອອກມາຈາກປາກອັນດຽວກັນ ພີ່ນ້ອງທັງຫລາຍຂອງ*
*ເຮົາເອີຍ, ບໍ່ຄວນໃຫ້ການແນວນັ້ນເກີດມີມາ.*

"ບໍ່ມີໃຜສາມາດຝຶກແອບລີ້ນໄດ້" (ຢກບ 3:8), ຊຶ່ງເຮົາສາມາດໃຊ້ເພື່ອການດີແລະຊົ່ວ. ທ່ານຢາໂກໂບໄດ້ຊີ້ໃຫ້ເຫັນວ່າເຮົາບໍ່ສາມາດມາດຝຶກແອບລີ້ນຢ່າງໃດໂດຍຊີ້ໃຫ້ເຫັນວ່າພວກເຮົາບໍ່ເວົ້າຢູ່ກັບຮ່ອງກັບຮອຍ. ພວກເຮົາໃຊ້ລີ້ນເພື່ອສັຣເສີນພຣະເຈົ້າ ແລະ ປ້ອຍດ່າມະນຸດທີ່ພຣະເຈົ້າສ້າງໄວ້ຕາມຮູບເງົາຂອງພຣະອົງ.

ຄຳສອນຂອງທ່ານຢາໂກໂບອາດເກີນຄວາມຄາດຫວັງສຳລັບບາງຄົນ. ດັ່ງນັ້ນ ພວກເຮົາຈະເຮັດຈັ່ງໃດ? ຫຼື ພວກເຮົາຈະຢຸດ ຫຼືຍອມໃຫ້ການທົດລອງຕົວະ, ຄວາມບໍ່ລົງລອຍກັນ, ປ້ອຍດ່າ, ແລະ ເວົ້າຂ້ວນຄົນອື່ນ ທຸກຄັ້ງ. ບໍ່ດອກ ແລະນັ້ນແມ່ນສິ່ງທີ່ທ່ານຢາໂກໂບຊີ້. *"ພີ່ນ້ອງທັງຫລາຍຂອງເຮົາເອີຍ, ບໍ່ຄວນໃຫ້ການແນວນັ້ນເກີດມີມາ"(ຂໍ້ 10).* ຍ້ອນວ່າພວກເຮົາຖືກທົດລອງໃຫ້ທຳບາບດ້ວຍ

ລີ້ນ, ພວກເຮົາຄວນລະວັງຕົວແລະມອບການທົດລອງນີ້ໃຫ້ອົງພຣະຜູ້ເປັນເຈົ້າເປັນປະຈຳ. ເພິ່ງຕົວເອງຄວບຄຸມຕົວເອງບໍ່ແມ່ນຄຳຕອບ. ທາງດຽວທີ່ເຮົາສາມາດໃຊ້ລີ້ນຂອງເຮົາເພື່ອພຣະປະສົງດີຂອງພຣະເຈົ້າສເມີ <u>ແມ່ນຍອມໃຫ້ພຣະເຈົ້າຄວບຄຸມຊີວິດເຮົາ.</u> ໃນຂໍ້ 11-12, ຢາໂກໂບຊີ້ໃສ່ທັມມະຊາດ. ບໍ່ນ້ຳພຸບໍ່ໄດ້ໃຫ້ທັງນ້ຳຫວານແລະນ້ຳຂົມພ້ອມກັນ. ທ່ານບໍ່ອາດເຫັນຕົ້ນໂອລີຟ໌ເກີດຂຶ້ນເທິງຕົ້ນເດື່ອເທດ. "ເຄືອອະງຸ່ນຈະເກີດຜົນເປັນໝາກກອກເທດບໍ່ໄດ້" (ຂໍ້ 12). ອີກເທື່ອນຶ່ງ, ຕົ້ນໄມ້ແຕ່ລະແນວຈະເກີດຜົນຂອງມັນເອງ.

ຄຳເວົ້າທີ່ດົນໃຈແລະນຳຄວາມຫວັງມາໃຫ້ກໍມາຈາກປາກຂອງຄົນມີປັນຍາ. ພຣະເຈົ້າ-ຄວບຄຸມຄົນ. ເຖິງແມ່ນວ່າ, ພຣະເຈົ້າບໍ່ໄດ້ຄວບຄຸມເຮົາ-ຖ້າພວກເຮົາບໍ່ຍອມຢູ່ໄຕ້ຄວາມເປັນພຣະເຈົ້າຂອງພຣະອົງ-ພວກເຮົາກໍຈະເວົ້າຂ້ວນຄົນອື່ນເໝືອນກັນກັບຄົນອື່ນໆ. ເຫດຜົນນຶ່ງທີ່ພວກເຮົາຖືກທົດລອງໃຫ້ເວົ້າຂ້ວນຄົນອື່ນນັ້ນກໍຍ້ອນວ່າການຢຽບຍ່ຳຄົນອື່ນໃຫ້ຕົກຕ່ຳລົງມັນເຮັດໃຫ້ເຮົາຮູ້ສຶກດີຂຶ້ນກ່ຽວກັບຕົວເຮົາເອງ. "ຄວາມສົມເຫດສົມຜົນທາງດ້ານສິນທັມນີ້" ສົ່ງຜົນໃຫ້ເກີດ "ຄວາມຮູ້ສຶກດີໃຈທີ່ຮູ້ວ່າຄົນອື່ນແຫ່ງຮ້າຍກວ່າເຮົາ." ມັນບໍ່ຄວນຈະເປັນແບບນີ້. ພວກເຮົາບໍ່ຕ້ອງເຮັດຕາມພຶດຕິກັມການທຳລາຍນີ້, ບໍ່ເປັນດັ່ງນັ້ນ ຖ້າຄວາມສັມພັນຂອງເຮົາກັບພຣະເຈົ້າເປັນແຫຼ່ງທີ່ມາຂອງຕົວຕົນເຮົາ. ຖ້າພຣະອົງນຳພາລີ້ນຂອງເຮົາ, ພວກເຮົາຈະບໍ່ໃຊ້ມັນທຳລາຍຄົນອື່ນ.

*ພີ່ນ້ອງທັງຫລາຍເອີຍ, ໃນທີ່ສຸດນີ້, ສິ່ງໃດທີ່ສັດຈິງ, ສິ່ງໃດທີ່ໜ້ານັບຖື, ສິ່ງໃດທີ່ຍຸດຕິທັມ, ສິ່ງໃດທີ່ບໍລິສຸດ, ສິ່ງໃດທີ່ໜ້າຮັກ, ສິ່ງໃດທີ່ໜ້າຍົນດີ, ສິ່ງໃດທີ່ລ້ຳເລີດ ແລະຖ້າມີສິ່ງໃດທີ່ຄວນແກ່ການສັນລະເສີນ ຈົ່ງພິຈາລະນາເຖິງສິ່ງເຫຼົ່ານັ້ນ (ຟີລິບປອຍ 4:8).* ແມ່ນ, ມັນອາດຈະສ້າງຄວາມງຽບອຶດອັດໃຈຊົ່ວລະຍະ, ແຕ່ຄວາມຮູ້ສຶກອຶດອັດໃຈພຽງສອງສາມວິນາທີຍັງດີກວ່າໃຊ້ເວລາຫຼາຍຊົ່ວໂມງຟື້ນຟູຢູ່ກັບຄວາມສັມພັນທີ່ແຕກຫັກຍ້ອນຄຳເວົ້າຂ້ວນຂອງເຮົາ. ຫຼັງຈາກຄິດໄດ້, ພວກເຮົາຄວນຢຸດຊົ່ວຂນະນຶ່ງແລະອະທິຖານ. ມອບໃຫ້ພຣະອົງຄວບຄຸມ. ເຮົາບໍ່ຈຳເປັນຕ້ອງເກາະຕິດຢູ່ກັບການນິນທາທາງລົບ ຫຼືສິ້ນສຸດໃນການເວົ້າດູຖູກທີ່ເຈັບປວດ, ຫຼືພວກເຮົາຈະກາຍເປັນຄົນມີປັນຍາໄດ້ຮັບໄຊຊນະເມື່ອເຮົາມອບການຄວບຄຸມລີ້ນຂອງເຮົາໃຫ້ພຣະຜູ້ເປັນເຈົ້າ.

*ເມື່ອໃດທ່ານເຫັນຣິດຄຳເວົ້າເປັນຜົນຮ້າຍຕໍ່ຜູ້ໃດຜູ້ນຶ່ງ?*

## 3. <u>ຢາໂກໂບ 3:13-18.</u>

*13 ໃນພວກເຈົ້າຜູ້ໃດມີສະຕິປັນຍາແລະຄວາມເຂົ້າໃຈ ກໍໃຫ້ຜູ້ນັ້ນສະແດງການປະຕິບັດຂອງຕົນໂດຍກິລິຍາອັນດີ ມີໃຈອ່ອນສຸພາບປະກອບດ້ວຍປັນຍາ. 14 ແຕ່ຖ້າພວກເຈົ້າມີໃຈເຫິງສາອັນຂົມຂື່ນແລະມັກໃຫຍ່ໄຝ່ສູງ ກໍຢ່າໂອ້ອວດແລະຢ່າທໍລະຍົດຕໍ່ຄວາມຈິງ. 15 ປັນຍາຢ່າງນີ້ບໍ່ໄດ້ລົງມາຈາກເບື້ອງເທິງ ແຕ່ເປັນປັນຍາຢ່າງໂລກ, ເປັນຢ່າງທັມມະດາມະນຸດແລະເໝືອນຢ່າງຜີຮ້າຍ. 16 ເພາະວ່າທີ່ໃດມີຄວາມເຫິງສາ ແລະຄວາມມັກໃຫຍ່ໄຝ່ສູງ ທີ່ນັ້ນກໍວຸ້ນວາຍແລະມີການເຮັດຊົ່ວຮ້າຍທຸກຢ່າງ. 17 ແຕ່ສະຕິປັນຍາທີ່ມາແຕ່ເບື້ອງເທິງນັ້ນກ່ອນອື່ນກໍເປັນບໍຣິສຸດ ແລ້ວຈຶ່ງປະກອບດ້ວຍຄວາມສງົບສຸກ, ສຸພາບ, ແລະຍອມຟັງງ່າຍ, ເຕັມໄປດ້ວຍຄວາມເມດຕາແລະໃຫ້ຜົນດີ, ບໍ່ເລືອກໜ້າຄົນແລະບໍ່ໜ້າຊື່ໃຈຄົດ. 18 ຜູ້ສ້າງສັນຕິສຸກຫວ່ານຢ່າງສັນຕິສຸກ ຈຶ່ງໄດ້ກ່ຽວຄວາມຊອບທັມ.*

*ເທັກໂນໂລຢີມີຜົນກະທົບຫຍັງໃນການໃຊ້ຄຳເວົ້າຂອງເຮົາ?*

ກ່ອນໜ້ານີ້ໃນຈົດໝາຍຂອງທ່ານຢາໂກໂບສັນຍາວ່າພຣະເຈົ້າຈະປະທານປັນຍາໃຫ້ແກ່ຜູ້ທີ່ທູນຂໍດ້ວຍຄວາມເຊື່ອ (ຢກບ 1:5-6). ມາບັດນີ້ເພິ່ນຫັນມາຫາຫົວຂໍ້ທີ່ສະແດງໃຫ້ເຫັນວ່າປັນຍາມີຜົນປໂຍດຕໍ່ເຮົາຢ່າງໃດ. ແຕ່ຂໍ້ 1-12, ພວກເຮົາຈະເຫັນວ່າປັນຍາມີຜົນປໂຍດຕໍ່ຄຳເວົ້າ ແລະ ການປະພຶດຂອງເຮົາຢ່າງໃດ. ພຽງແຕ່ກະທຳແລະເວົ້າສິ່ງທີ່ຖືກຕ້ອງບໍ່ພຽງພໍ. ເວລາເຮົາໄດ້ຮັບການນຳພາຈາກປັນຍາຂອງພຣະເຈົ້າ, ການກະທຳແລະຄຳເວົ້າອັນຖືກຕ້ອງຂອງເຮົາກໍຈະຖືກຈຳກັດຢູ່ໃຕ້ອຳນາດຂອງການປະພຶດແລະການເຄື່ອນໄຫວອັນເໝາະສົມ.

ພວກເຮົາຕ້ອງການປັນຍາຂອງພຣະເຈົ້າໃນການຕໍ່ສູ້ຄວບຄຸມລີ້ນທີ່ບໍ່ຢູ່ກັບຮ່ອງກັບຮອຍຂອງເຮົາ. ເມື່ອພວກເຮົາຖືກຍົວະເຍົ້າໃຫ້ລີ້ນຂອງເຮົາສ້າງຄວາມເສັຽຫາຍໃນຄວາມສັມພັນຂອງເຮົາ, ພວກເຮົາຕ້ອງຢຸດ, ຄິດ, ແລະ ອະທິຖານ, ສແວງຫາປັນຍາ. ພວກເຮົາ

ບໍ່ສາມາດປ່ອຍໃຫ້ປັນຍາທັມມະດາ-ທີ່ທ່ານຢາໂກໂບຮຽກວ່າ *"ໃຈເຫິງສາອັນຂົມຂື່ນແລະຄວາມມັກໃຫຍ່ໄຝ່ສູງ" (ຂໍ້ 14)-ນຳພາເຮົາ.*

ທ່ານຢາໂກໂບບໍ່ໄດ້ໃຊ້ຖ້ອຍຄຳ "ປັນຍາທັມມະດາ" ແຕ່ເພິ່ນຊີ້ແຈງການໃຊ້ແນວຄິດສາມຢ່າງ: *"ປັນຍາຢ່າງໂລກ, ຢ່າງທັມມະ-ດາມະນຸດ ແລະ ຢ່າງຜີຮ້າຍ."* ຖ້າເຮົາປ່ອຍໃຫ້ປັນຍາຢ່າງໂລກ, ຢ່າງທັມມະດາມະນຸດ ແລະຢ່າງຜີຮ້າຍນຳພາຄວາມຄິດຂອງເຮົາ, ພວກເຮົາກໍຈະປະພຶດແລະເວົ້າດ້ວຍໃຈຂົມຂື່ນ ແລະເຫັນແກ່ຕົວ. ຈາກປັນຍາຢ່າງໂລກນີ້, ພວກເຮົາກໍຈະເຮັດໄປໂລດ, ເຖິງແມ່ນມັນຈະທຳລາຍພາບພົດຄົນອື່ນດ້ວຍການເວົ້າຂ້ອນຫຼືໝິ່ນປມາດເຂົາ ແລະທຳລາຍຈິດໃຈເຂົາດ້ວຍການເວົ້າສຽດສີກໍຕາມ.

ໂດຍທາງກົງກັນຂ້າມ, ປັນຍາຂອງພຣະເຈົ້າສະແດງອອກດ້ວຍການກະທຳ, ຄຳເວົ້າ, ແລະ ດ້ວຍອຸປນິສັຍ ຄື: *ບໍຣິສຸດ, ຄວາມສງົບສຸກ, ສຸພາບ, ແລະຍອມຟັງງ່າຍ, ເຕັມໄປດ້ວຍຄວາມເມດຕາແລະໃຫ້ຜົນດີ, ບໍ່ເລືອກໜ້າຄົນແລະບໍ່ໜ້າຊື່ໃຈຄົດ.* ປັນຍາຂອງພຣະເຈົ້າໃຫ້ອຳນາດການເວົ້າ ແລະການປະພຶດທີ່ນຳກຽດຕິຍົດມາສູ່ພຣະອົງເອງ.

*ກຸ່ມຂອງພວກເຮົາຈະຊ່ວຍກັນຖວາຍກຽດແດ່ພຣະເຈົ້າດ້ວຍການສື່ສານຂອງເຮົາຢ່າງໃດ?*

## ນຳໃຊ້ໃນຊີວິດ

ປັນຍາຂອງພຣະເຈົ້າມີເພື່ອຊ່ວຍທ່ານຄວບຄຸມການເວົ້າຂອງທ່ານ. ຈົ່ງເລືອກການນຳໃຊ້ໃນຊີວິດອັນນຶ່ງຕໍ່ລົງໄປນີ້:

- **ຈົ່ງທ່ອງຈຳຟີລິບປອຍ 4:8** ເພື່ອທ່ານຈະລະນຶກໄດ້ເວລາທ່ານຖືກທົດລອງໃຫ້ເວົ້າຂ້ອນຫຼືທ່າທາງໝິ່ນປມາດຄົນອື່ນ. *"ພີ່ນ້ອງທັງ-ຫລາຍເອີຍ, ໃນທີ່ສຸດນີ້, ສິ່ງໃດທີ່ສັດຈິງ, ສິ່ງໃດທີ່ໜ້ານັບຖື, ສິ່ງໃດທີ່ຍຸດຕິທັມ, ສິ່ງໃດທີ່ບໍຣິສຸດ, ສິ່ງໃດທີ່ໜ້າຮັກ, ສິ່ງໃດທີ່ໜ້າຍິນດີ, ສິ່ງໃດທີ່ລ້ຳເລີດ ແລະຖ້າມີສິ່ງໃດທີ່ຄວນແກ່ການສັຣເສີນ ຈົ່ງພິຈາຣະນາເຖິງສິ່ງເຫລົ່ານັ້ນ."*
- **ຈົ່ງບັນທຶກຮັກສາບຸນຄຸນ.** ການສຶກສາຈາກມະຫາວິທຍາລັຍ ໃຈກາງ ຟລໍຣິດ້າ ພົບວ່າ ການຮັກສາບົດບັນທຶກຄວາມກະຕັນຍູໃນສອງອາທິດຊ່ອຍໃຫ້ຫຼຸດຜ່ອນການເວົ້າຂ້ອນກັນໃນບ່ອນທຳງານ. ເລີ້ມຈົດບັນທຶກແລະໃຊ້ເວລາສອງສາມນາທີຂຽນກ່ຽວກັບຄົນທີ່ທ່ານສຳນຶກໃນບຸນຄຸນເຂົາ.
- **ຈົ່ງຂໍໂທດຜູ້ທີ່ທ່ານທຳລາຍເຂົາດ້ວຍການເວົ້າຂ້ອນແລະດູໝິ່ນຢຽບຫຍາມເຂົາ.** ເຮັດສິ່ງທີ່ທ່ານສາມາດເຮັດໄດ້ ດ້ວຍຈົດໝາຍ, ໂທຣສັບ, ຫຼືເວົ້າໜ້າຕໍ່ໜ້າເພື່ອຂໍການໃຫ້ອະພັຍໃນຄຳເວົ້າທີ່ທ່ານໄດ້ເວົ້າ.

ພວກເຮົາທຸກຄົນເວົ້າໄປແລ້ວກິນແໜງ. ສ່ວນໃຫຍ່ມັນໃຊ້ເວລາຫຼາຍປີກວ່າຈະຮັກສາຮອຍແຕກທີ່ຄຳເວົ້າຂອງເຮົາເປັນເຫດເສັຽຫາຍ. ໃຫ້ມາອ້ອນວອນຂໍພຣະເຈົ້າຊ່ອຍຄວບຄຸມລີ້ນຂອງເຮົາກ່ອນ ແທນທີ່ຈະແກ້ໄຂຄວາມຈິບຫາຍໃນພາຍຫຼັງ.

**ອຸປຖັມໂດຍ ລາວຊາວເຫີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**